## ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກສາລີ

(ສະບັບທົດລອງ)

ຂຽນໂດຍ: ທ່ານ ວັນນາ
ຂໍ້ມູນຈາກບ້ານ: ທ່ານາ ເມືອງ ໄຊຍະບູລີ

2007

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com

# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກສາລີ

ຮຽບໂຮມ ແລະຈັດໜ້າໂດຍ: ນາງ ກອງມະນີ ຄຳຜາຍ
ຜູ້ແຕ້ມ:
ຜູ້ຮຽບຮຽງ:
ເຈົ້າຂອງ:
ສຶກສາແຂວງໄຊຍະບູລີ ແລະ ສູນອົບຮົມຮ່ວມພັດທະນາ

Pestalozzi Children's Foundation
A world for Children

PDF created with pdfFactory Pro trial version www.pdffactory.com

## ຄຳນຳ

ປື້ມພູມປັນຍາທ້ອງຖິ່ນເຫລັ້ມນີ້ໄດ້ມາຈາກການຂຽນຂອງຊາວບ້ານ ແລະ ອາສາສະໝັກເຊິ່ງໄດ້ຮັບການຮຽບຮຽງເບື້ອງຕົ້ນຈາກອຳນວຍການສູນອົບຮົມຮ່ວມພັດທະນາ ແລະ ກະຊວງສຶກສາທິການ.

ປື້ມເຫລັ້ມນ້ອຍໆນີ້ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫລາຍໆກິດຈະກຳທີ່ເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາ ແລະ ສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍມາສອນຫ້ອງ ປໍ1, ປໍ2 ແລະ ບົດທີ່ຍາກກໍສອນຫ້ອງທີ່ໃຫຍ່ຂຶ້ນໄປ.

ຄະນະຈັດທຳຄິດວ່າຍັງມີຫລາຍບັນຫາທີ່ຍັງບໍ່ທັນພຽງພໍ ແລະ ຂາດໄປຫວັງວ່າຄົງຈະໄດ້ຮັບຄຳຕຳນິຕິຊົມຈາກທຸກໆທ່ານ ພວກເຮົາພ້ອມທີ່ຈະປັບປຸງນຕາມຄວາມເໝາະສົມ.

ຄະນະຈັດທຳ

ຮູບ ແລະປະຫວັດຂອງຜູ້ຂຽນ

ທ້າວ ວັນນາ ລິນທອນສີ
ອາຍຸ 57 ປີ, ອາຊີບ ປະຊາຊົນ

ເຫດຜົນທີ່ຂຽນຫົວຂໍ້ນີ້:

PDF created with pdfFactory Pro trial version www.pdffactory.com

| | |
|---|---|
| ໂອຍລະນາ | ຄົນຟັງນີ້ນາ |
| ຈົ່ງສາມັກຄີ | ກັນເດີເຈົ້າ |

**ບົດເລກ**

ຂ້ອຍປູກສາລີ 20 ຂຸມ ຂຸມໜຶ່ງໄດ້ 4 ຕົ້ນ, ຕົ້ນໜຶ່ງມີ 4 ຮວງຖາມວ່າຂ້ອຍຈະໄດ້ສາລີທັງໝົດຈັກຮວງ?

**ເກມ:** ສາລີ

ຂ້ອຍມີສາລີຢູ່ຢູ່ 5 ຮວງ ເອົາໃຫ້ຄົນ 5 ຄົນ ແລ້ວໃຫ້ຫັກເຄິ່ງແຂ່ງກັນຖ້າຫາກກວ່າຜູ້ໃດຫັກເຄິ່ງແທ້ໆນັ້ນຕ້ອງຊະນະ. ຖາຫາກວ່າຜູ້ໃດບໍ່ເຄິ່ງແມ່ນບໍ່ຊະນະ ແລະຜູ້ນັ້ນຕ້ອງໄດ້ຟ້ອນລຳວົງກ້ຽວກັນ

**<u>ຄວາມເປັນມາ</u>**

ປະຊາຊົນລາວບັນດາເຜົ່າບ້ານເຮົາຕັ້ງແຕ່ໃດມາແລ້ວເປັນຄົນດຸໝັ່ນຂະຫຍັນພຽນໃນການອອກແຮງງານ ການປູກສາລີເປັນກະສິກຳໜຶ່ງທີ່ຊາວບ້ານເຮົາມັກປູກເພື່ອເປັນອາຫານການກິນ ແລະເປັນສິນຄ້າຂາຍທ້ອງຕະຫຼາດ

**<u>ລັກສະນະຂອງໝາກສາລີ</u>**

ຕົ້ນສາລີຈັດຢູ່ໃນປະເພດພືດລົ້ມລຸກ, ມີໃບຍາວ ແລະດອກຢູ່ຍອດຂອງຕົ້ນ, ສ່ວນໝາກແມ່ນມີຢູ່ຕາມລຳຕົ້ນ, ໝາກສາລີມີລັກສະນະເປັນຟັກຍາວຫໍ່ຫຸ່ມດ້ວຍກາບ ແລະມີຍອຍຢູ່ປາຍຂອງມານສາລີ

PDF created with pdfFactory Pro trial version www.pdffactory.com

ບໍ່ເປັນພະຍາດ ຄືພືດອື່ນໄກ
ຜົນໄດ້ຫຼວງຫຼາຍ ສົ່ງຂາຍພາຍນອກ
ຂ້ອຍນີ້ຂໍບອກ ໄດ້ເງິນຄໍາດີ
ໃຫ້ປູກສາລີ ໃຫ້ຫຼາຍກວ່ານີ້
ຕ້ອງເຮັດແນວນີ້ ຈຶ່ງໄດ້ຜົນງານ

## ແນວພັນ

1. ແກ່ນສາລີ (ໃຊ້ເອົາທາງກົາຮວງປະມານເຄິ່ງໜຶ່ງ)

**ເພງ**: ທົ່ງວສວນສາລີ

ສວນສາລີຂ້ອຍ ຢູ່ແຄມທົ່ງນາ
ພໍ່ແມ່ອາວອາ ເຊີນຍາມເຊີນແວ່
ສວນຢູ່ແຄມນາ ງາມຫຼາຍແທ້ໆ
ເຊີນນ້ອງເຂົ້າມາ ທົ່ງວສວນສາລີ

**ລຳເຕີ້ຍ**: ມາປູກສາລີ

## ອຸປະກອນ

1. ຈົກ
2. ພ້າ

ຟັງເຖີດ ພີ່ນ້ອງທັງຫຼາຍ (ຊໍ້າ)
ຂໍອະທິບາຍ ເລື່ອງປູກສາລີ
ພັນດີອີ່ຫຼີ່ ພີ່ນ້ອງບ້ານເຮົາ
ກະຈັ່ງວ່າມີ ລຳເຕີ້ຍ
ມາຂໍເຊີນຊວນ ພວກນ້ອງພວກພີ່
ຊີວິດສຸກຂີ ຖ້າເຮົາບໍ່ຄ້ານ (ຊໍ້າ)
ມັນຊູຊວ້ານ ຊາດປະຊາ

PDF created with pdfFactory Pro trial version www.pdffactory.com

3. ແວກ

**ກາບ**: ປູກສາລີ

ເຊີນພວກນ້ອງ    ມາປູກສາລີ
ດິນບ່ອນດີ    ງາມຫຼາຍຈົນລົ້ນ
ພໍ່ແມ່ຈົ່ມ    ວ່າດີໃຈຫຼາຍ
ເປັນຂອງຫຼາຍ    ເຮັດເຂົ້າໜົມປາດ
ເຮັດບໍ່ຂາດ    ຈົນໄດ້ເງິນຄຳ
ຂ້ອຍເຮັດນຳ    ຕາມເພິ່ນຊີ້ບອກ
ໄດ້ໄປຊອກ    ແນວພັນທີ່ງາມ    4. ສຽມ
ໄດ້ມາຕາມ    ຄວາມທີ່ເພິ່ນສັ່ງ

**ເຊີ້ງ**: ມາປູກສາລີ

ມາພວກເຮົາມາ    ມາສ້າງມາສາ
ມາພັດທະນາ    ການປູກສາລີ
ໃນທຸກໆປີ    ປູກບໍ່ໄດ້ຂາດ    6. ຄາດ

PDF created with pdfFactory Pro trial version www.pdffactory.com

## ຂັ້ນຕອນການປູກສາລີ

1. ການປູກສາລີແມ່ນປູກ 25x75 ຊັງຕີແມັດ ແລ້ວປູກເປັນແຖວ

2. ຫຼັງຈາກນັ້ນເຮົາກໍເອົາຄາດເກາະຫຍ້າອອກກ່ອນແລ້ວຈຶ່ງປູກ

3. ໃນການປູກນັ້ນຕ້ອງໃສ່ຂຸມລະສອງເມັດຖ້າເປັນເຮັກຕາຕ້ອງໝົດ ແນວປະມານ 18-20 ກິໂລ

## ຄຸນປະໂຫຍດຂອງສາລີ

- ສາລີເປັນພືດທັນຍາຫານສີຂຽວສາລີຍັງບັນຈຸວິຕາມິນເອ, ບີ2, ວິຕາມິນອີ ແລະອາຊິດນິໂກຕິນິດ ສາລີບໍລິໂພກໄດ້ທັງຄົນ ແລະສັດ ເຊັ່ນ: ງົວ, ຄວາຍ, ໝູ ແລະສັດປີກ
- ສ່ວນຕົ້ນສາລີສາມາດນຳໃຊ້ເຮັດຫຍ້າໃຫ້ສັດ

PDF created with pdfFactory Pro trial version www.pdffactory.com